ເຈັ້ຍຂໍ້ມູນ

# ການຕໍ່ວ່າຮ້ອງຮຽນພາຍໃຕ້ປະມວນກົດໝາຍວ່າດ້ວຍການແບ່ງແຍກເຊື້ອຊາດ

## ປະມວນກົດໝາຍວ່າດ້ວຍການແບ່ງແຍກເຊື້ອຊາດແມ່ນຫຍັງ?

*ປະມວນກົດໝາຍວ່າດ້ວຍການແບ່ງແຍກເຊື້ອຊາດ* 1975 (Cth) (the RDA) ໄດ້ລະບຸວ່າເປັນການກະທຳທີ່ຜິດກົດໝາຍຖ້າມີຄົນປະຕິບັດຕໍ່ທ່ານຢ່າງບໍ່ຍຸຕິທຳ ຍ້ອນ ເຊື້ອຊາດ, ສີຜິວ, ເຊື້ອສາຍ, ສັນຊາດ ຫຼື ຊົນເຜົ່າ ຫຼື ມີຖານະເປັນຄົນຍ້າຍຖິ່ນຖານເຂົ້າມາ.

ນອກນີ້ ກົດໝາຍນີ້ຍັງລະບຸດ້ວຍວ່າການກຽດຊັງເຊື້ອຊາດກໍຜິດກົດໝາຍເຊັ່ນກັນ.

## ກົດໝາຍນີ້ຈະນຳມາໃຊ້ໄດ້ຕອນໃດ?

ທ່ານສາມາດນຳກົດໝາຍ RDA ນີ້ມາໃຊ້ເພື່ອໃຫ້ໄດ້ຮັບການປະຕິບັດຕໍ່ຕົວທ່ານແບບຍຸຕິທຳໃນຂົງເຂດຊີວິດໃນສັງຄົມຫຼາຍຢ່າງເຊັ່ນ:

- **ການເຮັດວຽກ** – ການຊອກເອົາວຽກ, ກົດເກນແລະເງື່ອນໄຂຂອງວຽກງານ, ການຝຶກງານ, ການເລື່ອນຊັ້ນ, ການຖືກໄລ່ອອກການ.
- **ການສຶກສາຮ່ຳຮຽນ** – ການລົງທະບຽນຈົດຊື່ຫຼືການຮ່ຳຮຽນທີ່ໂຮງຮຽນເອກະຊົນຫຼືໂຮງຮຽນຫຼວງ, ວິທະຍາໄລຫຼືມະຫາວິທະຍາໄລ.
- **ທີ່ຢູ່ອາໄສ** – ການເຊົ່າຫຼືຊື້ເຮືອນຫຼືຫ້ອງແຖວ.
- **ການຂໍເອົາຫຼືໃຊ້ບໍລິການຕ່າງໆ** – ເຊັ່ນທະນາຄານຫຼືປະກັນໄພ, ບໍລິການຈາກກະຊວງຕ່າງໆຂອງລັດຖະບານ, ບໍລິການຂົນສົ່ງຫຼືໂທລະຄົມມະນາຄົມ, ບໍລິການຈາກຜູ້ຊ່ຽວຊານເຊັ່ນບໍລິການຂອງທະນາຍຄວາມ, ແພດ ຫຼື ນາຍຊ່າງ, ບໍລິການທີ່ຫ້ອງອາຫານ, ຮ້ານຄ້າ ຫຼື ສະຖານທີ່ບັນເທີງຕ່າງໆ.
- **ການເຂົ້າໃຊ້ສະຖານທີ່ສາທາລະນະ** – ເຊັ່ນສວນ, ຫ້ອງການລັດຖະບານ, ຮ້ານອາຫານ, ໂຮງແຮມ ຫຼື ຫ້າງສັບພະສິນຄ້າ.

## ການແບ່ງແຍກເຊື້ອຊາດແມ່ນຫຍັງ?

ການແບ່ງແຍກເຊື້ອຊາດເກີດຂຶ້ນເມື່ອຄົນຜູ້ນຶ່ງຖືກປະພຶດຕໍ່ຕົນໂດຍທີ່ຕົນໄດ້ຮັບປະໂຫຍດນ້ອຍກວ່າຄົນອີກຄົນໜຶ່ງເຊິ່ງຢູ່ໃນສະພາບທີ່ຄ້າຍຄືກັນ ຍ້ອນເຊື້ອຊາດ, ສີຜິວ, ເຊື້ອສາຍ, ສັນຊາດ ຫຼື ຊົນເຜົ່າ ຫຼື ມີຖານະເປັນຄົນຍ້າຍຖິ່ນຖານເຂົ້າມາຂອງຕົນ. ຍົກຕົວຢ່າງ, ຈະຖືວ່າເປັນ 'ການແບ່ງແຍກໂດຍຕົງ' ຖ້າວ່າເອເຢັນຂາຍ-ເຊົ່າເຮືອນປະຕິເສດບໍ່ໃຫ້ຄົນໜຶ່ງເຊົ່າເຮືອນຍ້ອນວ່າຄົນໆນັ້ນມີພື້ນຖານມາຈາກເຊື້ອຊາດໃດນຶ່ງຫຼືຍ້ອນສີຜິວ.

April 2020

ການແບ່ງແຍກເຊື້ອຊາດສາມາດເກີດຂຶ້ນໄດ້ເຊັ່ນກັນເມື່ອມີການອອກກົດລະບຽບຫຼືນະໂຍບາຍທີ່ໃຊ້ໄດ້ສຳລັບທຸກໆຄົນແຕ່ວ່າເກີດມີຜົນກະທົບຕໍ່ກຸ່ມຄົນທີ່ມາຈາກ ເຊື້ອຊາດໃດນຶ່ງ, ສີຜິວ, ເຊື້ອສາຍ, ສັນຊາດແລະຊົນເຜົ່າ ຫຼື ມີຖານະເປັນຄົນຍ້າຍຖິ່ນຖານເຂົ້າມາ. ອັນນີ້ເອີ້ນວ່າ 'ການແບ່ງແຍກທາງອ້ອມ'. ຍົກຕົວຢ່າງ, ອາດຈະເປັນການແບ່ງແຍກທາງອ້ອມ ຖ້າ ບໍລິສັດນຶ່ງເວົ້າວ່າພະນັກງານທຸກໆຄົນຕ້ອງບໍ່ໃສ່ໝວກຫຼືມີສິ່ງປົກຄຸມຫົວແບບອື່ນ ຢູ່ໃນບ່ອນເຮັດວຽກ, ຍ້ອນວ່າມັນມີແນວໂນ້ມວ່າຈະເກີດຜົນກະທົບທີ່ບໍ່ຍຸຕິທຳສຳລັບຄົນບາງກຸ່ມທີ່ມາຈາກພື້ນຖານ ເຊື້ອຊາດ / ຊົນເຜົ່າ ໃດໜຶ່ງ.

## ການກຽດຊັງເຊື້ອຊາດແມ່ນຫຍັງ?

ຖືວ່າເປັນການຜິດກົດໝາຍຖ້າວ່າມີການປະພຶດຢ່າງໃດຢ່າງນຶ່ງໃນທີ່ສະທາລະນະໂດຍອີງໃສ່ເຊື້ອຊາດ, ສີຜິວ, ສັນຊາດຫຼືຊົນເຜົ່າຂອງບຸກຄົນຫຼືກຸ່ມຄົນ ເຊິ່ງມີແນວໂນ້ມວ່າຈະເຮັດໃຫ້ຄົນນັ້ນ **ຮູ້ສຶກຖືກລ່ວງລະເມີດ**, **ດູຖູກ**, **ສ້າງຄວາມອັບອາຍ ຫຼື ຂູ່ເຂັນ**. ຕົວຢ່າງຂອງການກຽດຊັງເຊື້ອຊາດອາດຈະລວມເຖິງ:

- ບົດຄວາມເນື້ອເລື່ອງໃດໆທາງອິນເຕີແນັດ, ລວມເຖິງການອອກທາງ ອີ-ເມວ, ບະລອັກ, ໄຊ້ທ໌ເຄືອຂ່າຍທາງສັງຄົມໂຊຊຽນ ແລະ ໄຊ້ທ໌ທີ່ເຜີຍແຜ່ພາບວີດີໂອ.

- ການອອກຄວາມເຫັນຫຼືຮູບພາບແບບລ່ວງລະເມີດໃນເອກະສານພິມເຜີຍແຜ່ເຊັ່ນ ທາງໜັງສືພິມ, ນິຕະຍະສານ, ເຈັ້ຍພັບ ຫຼື ໃບປິວ

- ການກ່າວຄຳປາໄສທີ່ລ່ວງລະເມີດໃນລະຫວ່າງເດີນປະທ້ວງໃນທີ່ສາທາລະນະ

- ການອອກຄວາມເຫັນທີ່ເປັນການກົດຂີ່ຂົ່ມເຫງໃນທີ່ສາທາລະນະ, ເຊັ່ນ ໃນຮ້ານຄ້າ, ບ່ອນເຮັດວຽກ, ສວນສາທາລະນະ, ໃນລົດໂດຍສານຫຼືທີ່ໂຮງຮຽນ

- ການອອກຄວາມເຫັນທີ່ເປັນການກົດຂີ່ຂົ່ມເຫງໃນບ່ອນຫຼິ້ນກິລາ ຈາກນັກກິລາ, ຄົນຊົມ, ຄູຝຶກ ຫຼື ເຈົ້າໜ້າທີ່.

## ຍາມໃດທີ່ພຶດຕິກຳລ່ວງລະເມີດທີ່ກ່ຽວພັນກັບເຊື້ອຊາດຖືວ່າບໍ່ຜິດກົດໝາຍ?

ກົດໝາຍ RDA ແນໃສ່ໃຫ້ມີຄວາມດຸ່ນດ່ຽງດ້ານສິດທິຂອງການສື່ສານຢ່າງເສຣີ ('ສິດໃນການປາກເວົ້າຢ່າງເສຣີ') ແລະສິດທິໃນການມີຊີວິດຢູ່ຢ່າງປາສະຈາກຄວາມກຽດຊັງເຊື້ອຊາດ. ກົດໝາຍ RDA ກ່າວວ່າ ສິ່ງຕ່າງໆຂ້າງລຸ່ມນີ້ ຖືວ່າບໍ່ຜິດກົດໝາຍຖ້າເປັນການປະພຶດແບບ **"ເຮັດຕາມສົມເຫດສົມຜົນແລະລິງໃຈ"** ໃນກໍລະນີ:

- **ຜົນງານສິລະປະຫຼືການສະແດງ** – ຍົກຕົວຢ່າງ, ການຫຼິ້ນລະຄອນເຊິ່ງມີການສະແດງນິໄສທີ່ລ່ວງລະເມີດເຊື້ອຊາດອອກມາຂອງຕົວລະຄອນ.

- **ຂໍ້ຄວາມ**, **ການພິມເຜີຍແຜ່**, **ການປຶກສາຫາລື ຫຼື ການໂຕ້ວາທີ ທີ່ກະທຳຂຶ້ນເພື່ອການສຶກສາຢ່າງແທ້ລິງຫຼືເພື່ອຈຸດປະສົງທາງວິທະຍາສາດ** – ຍົກຕົວຢ່າງ, ການປຶກສາຫາລືແລະໂຕ້ວາທີ ເລື່ອງນະໂຍບາຍສາທາຣະນະ ເຊັ່ນ ນະໂຍບາຍຄົນເຂົ້າອອກເມືອງ, ລະບົບນາງວັດທະນະທຳ ຫຼື ມາດຕະການພິເສດສຳລັບກຸ່ມຄົນບາງກຸ່ມ ໂດຍສະເພາະ.

- **ການຂຽນບົດລາຍງານທີ່ຍຸຕິທຳແລະຖືກຕ້ອງກ່ຽວກັບເລື່ອງທີ່ເປັນຈຸດສົນໃຈຕໍ່ສາທາຣະນະ** – ຍົກຕົວຢ່າງ, ການຂຽນບົດລາຍງານທີ່ຍຸຕິທຳໃນໜ້າໜັງສືພິມກ່ຽວກັບກິລິຍາທີ່ລ່ວງລະເມີດເຊື້ອຊາດ.

- **ການອອກຄວາມເຫັນທີ່ຍຸຕິທຳ**, ຖ້າວ່າຄວາມເຫັນນັ້ນແມ່ນການສະແດງຄວາມຄຶດເຫັນຂອງຄົນຜູ້ນຶ່ງ ທີ່ມີຄວາມເຊື່ອຢ່າງແທ້ຈິງ.

## ຂ້ອຍຈະເຮັດຢ່າງໃດຖ້າຂ້ອຍປະສົບກັບຄວາມປະພຶດທີ່ແບ່ງແຍກຫຼືກຽດຊັງເຊື້ອຊາດ?

ທ່ານອາດຈະຕ້ອງເອົາເລື້ອງນັ້ນຂຶ້ນມາເວົ້າໂດຍຕົງກັບບຸກຄົນຫຼືກຸ່ມຄົນທີ່ກ່ຽວຂ້ອງນັ້ນ.

ຖ້າເຮັດດັ່ງນີ້ຍັງແກ້ໄຂບໍ່ໄດ້, ຫຼືທ່ານຮູ້ສຶກວ່າບໍ່ສະບາຍໃຈທີ່ຈະເຮັດດັ່ງນັ້ນ, ທ່ານກໍສາມາດຮ້ອງຮຽນຂຶ້ນໄປຫາຄະນະກຳມາທິການສິດທິມະນຸດແຫ່ງປະເທດອອສເຕຣເລັຍໄດ້. ນອກນີ້ ທ່ານກໍຍັງສາມາດໃຫ້ໃຜຜູ້ໜຶ່ງເຊັ່ນ ທະນາຍຄວາມ, ຜູ້ຮ້ອງຮຽນຕາງໜ້າ ຫຼື ຢູນຽນ ຮ້ອງຮຽນຕາງໜ້າແທນທ່ານໄດ້.

ທ່ານບໍ່ຕ້ອງເສັຍຄ່າໃຊ້ຈ່າຍໃດໆໃນການຍື່ນຄຳຮ້ອງຮຽນຂຶ້ນຫາຄະນະກຳມາທິການນີ້.

ຄຳຮ້ອງຮຽນຂອງທ່ານຕ້ອງເຮັດເປັນລາຍລັກອັກສອນ. ຫ້ອງການຂອງຄະນະກຳມາທິການມີຟອມໃຫ້ທ່ານຕື່ມແລະສົ່ງກັບໄປທາງໄປສະນີຫຼືສົ່ງເປັນແຟກສ໌ຫາພວກເຮົາ ຫຼື ທ່ານສາມາດຍື່ນຄຳຮ້ອງຮຽນນີ້ທາງອອນລາຍຫຼືທາງເວັບໄຊ້. ຖ້າທ່ານບໍ່ສາມາດຍື່ນຄຳຮ້ອງເປັນລາຍລັກອັກສອນ, ເຮົາກໍສາມາດຊ່ວຍທ່ານໄດ້.

ເພື່ອວ່າໃຫ້ຄຳຮ້ອງຮຽນຂອງທ່ານເປັນຜົນ ຄຳຮ້ອງນັ້ນຕ້ອງມີການພິສູດໄດ້ຢ່າງສົມເຫດສົມຜົນວ່າເຫດການທີ່ທ່ານຢາກຮ້ອງຮຽນນັ້ນຖືວ່າເປັນການແບ່ງແຍກຕາມທີ່ກົດໝາຍລະບຸໄວ້ແລະທ່ານຕ້ອງແຈ້ງລາຍລະອຽດຢ່າງພຽງພໍກ່ຽວກັບຂໍ້ກ່າວຫານັ້ນ ເຊິ່ງລວມເຖິງວ່າ ມັນເກີດຫຍັງຂຶ້ນ, ເກີດຂຶ້ນເມື່ອໃດແລະເກີດຂຶ້ນຢູ່ໃສແລະມີໃຜແດ່ທີ່ເຂົ້າມາກ່ຽວຂ້ອງ.

ຄຳຮ້ອງຮຽນສາມາດຍື່ນເຂົ້າມາເປັນພາສາໃດກໍໄດ້. ຖ້າທ່ານຕ້ອງການຜູ້ແປເອກະສານຫຼືນາຍພາສາ, ເຮົາສາມາດ ຈັດຫາໃຫ້ທ່ານໄດ້.

## ຂ້ອຍຈະໄປຂໍເອົາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ທີ່ຕິດຕໍ່ຫາ ຄະນະກຳມາທິການສິດທິມະນຸດແຫ່ງປະເທດອອສເຕຣເລັຍແມ່ນ:

**ໂທລະສັບ**
ບໍລິການສະໜອງຂໍ້ມູນແຫ່ງຊາດ: 1300 656 419 ຫຼື (02) 9284 9888
TTY: 1800 620 241 (ໂທຟຣີ)
ແຟກສ໌: (02) 9284 9611

**ທາງໄປສະນີ**

GPO Box 5218
Sydney NSW 2001

**ທາງອອນລາຍ**
ອີເມວ: infoservice@humanrights.gov.au
ເວັບໄຊ້: www.humanrights.gov.au

ທ່ານສາມາດຍື່ນຄໍາຮ້ອງຮຽນທາງອອນລາຍໄດ້ທີ່
www.humanrights.gov.au/complaints_information/online_form/index.html.

ຖ້າທ່ານພິການຫູຫຼືມີບັນຫາດ້ານການຟັງ ທ່ານສາມາດຕິດຕໍ່ຫາພວກເຮົາໄດ້ໂດຍຜ່ານ TTY ທີ່ເລກໂທ 1800 620 241. ຖ້າທ່ານຕ້ອງນາຍພາສາແບບ Auslan , ເຮົາສາມາດຈັດຫາໃຫ້ທ່ານໄດ້.

ຖ້າທ່ານຕາພິການຫຼືມີບັນຫາດ້ານສາຍຕາ, ເຮົາກໍສາມາດໃຫ້ຂໍ້ມູນໃນແບບອື່ນໆຕາມຄໍາຂໍ.

## ຈຸດຕິດຕໍ່ອື່ນໆສໍາລັບຄໍາຮ້ອງຮຽນການກຽດຊັງເຊື້ອຊາດ

ຖ້າທ່ານມີຄວາມເປັນຫ່ວງກ່ຽວກັບເລື່ອງລາວທາງມີເດັຍ, ການອອກອາກາດ ຫຼື ເນື້ອໃນທາງອອນລາຍ ທີ່ສະແດງການລ່ວງລະເມີດ, ທ່ານສາມາດຍື່ນຄໍາຮ້ອງຮຽນຂຶ້ນໄປຫາ ທາງການຄວບຄຸມດ້ານການສື່ສານແລະມີເດັຍ (ACMA); ຄະນະກໍາມະການຄວບຄຸມມາດຕະຖານໃນການໂຄສະນາ (Advertising Standards Board) ສໍາລັບເລື່ອງໂຄສະນາ; ຫຼື ສະພາຂ່າວແຫ່ງປະເທດອອສເຕຣເລັຍ (Australian Press Council) ຖ້າກ່ຽວກັບເລື່ອງຕ່າງໆທີ່ຂຽນໃນໜັງສືພິມ. ນອກນີ້ ທ່ານກໍຍັງສາມາດຮ້ອງຮຽນໄປຫາ ບັນນາທິການ ຫຼື ຜູ້ຈັດການຂອງອົງການມີເດັຍນັ້ນ.

ຖ້າທ່ານມີຄວາມເປັນຫ່ວງກ່ຽວກັບພຶດຕິກໍາທີ່ລ່ວງລະເມີດຈາກຄົນຂ້າງບ້ານ, ທ່ານສາມາດໄປຫາສູນເພື່ອຄວາມຍຸຕິທໍາໃນຊຸມຊົນ (Community Justice Centre) ເພື່ອໃຫ້ເພິ່ນຊ່ວຍແກ້ໄຂບັນຫາໃຫ້, ຫຼື ຍື່ນໄປຫາກະຊວງເຄຫະ (Department of Housing) ຖ້າທ່ານອາໄສຢູ່ເຮືອນຫຼວງ.

**ຖ້າທ່ານຖືກຂົ່ມຂູ່ວ່າຈະມີການໃຊ້ຄວາມຮຸນແຮງຫຼືຖືກໂຈມຕີໂດຍການໃຊ້ກໍາລັງ ໃຫ້ໄປຫາຕໍາຫຼວດ.**

## ຄໍາແນະນໍາທາງກົດໝາຍໂດຍທົ່ວໆໄປ

ຖ້າທ່ານກໍາລັງຄຶດວ່າຈະທໍາການຮ້ອງຮຽນ, ທ່ານອາດຈະຕ້ອງການຄໍາແນະນໍາທາງກົດໝາຍຫຼືຕິດຕໍ່ໄປຫາຢູນຽນ. ສູນບໍລິການດ້ານກົດໝາຍແກ່ຊຸມຊົນ ສາມາດໃຫ້ຄໍາແນະນໍາຟຣີກ່ຽວກັບການແບ່ງແຍກຫຼືກົດຂີ່ຂົ່ມເຫັງ. ລາຍລະອຽດສໍາລັບຕິດຕໍ່ສູນບໍລິການດ້ານກົດໝາຍແກ່ຊຸມຊົນທີ່ໃກ້ບ້ານທ່ານທີ່ສຸດສາມາດເຂົ້າໄປຫາໄດ້ທີ່
www.naclc.org.au/directory.

**ການປະກາດບໍ່ຮັບຜິດຊອບ: ຂໍ້ມູນທີ່ສະໜອງໃຫ້ໃນເຈັ້ຍຂໍ້ມູນນີ້ແມ່ນມີເຈດຕະນາໃຫ້ໃຊ້ເປັນພຽງການຊີ້ແນະເທົ່ານັ້ນ. ຂໍ້ມູນນີ້ບໍ່ສາມາດນໍາໃຊ້ແທນຄໍາແນະນໍາດ້ານກົດໝາຍໄດ້.**